ຈົດໝາຍຂ່າວ UMP

# ບ້ານເຮົາ

6

ສະບັບ 6 / ກຸມພາ 2024

‘ບ້ານເຮົາ’ ແມ່ນຫຍັງ?

ບ້ານເຮົາ ແມ່ນຈົດໝາຍຂ່າວທີ່ສະໜອງຂໍ້ມູນກ່ຽວກັບການພັດທະນາຕົວເມືອງໃນນະຄອນຫຼວງວຽງຈັນ ແລະ ເຂດຖັດໄປ. ຈົດໝາຍຂ່າວບໍ່ພຽງແຕ່ຕີພິມຂ່າວສານສໍາລັບຜູ້ປະກອບອາຊີບໃນຂະແໜງສະຖາປັດຕະຍາກໍາ ແລະ ການວາງແຜນຜັງເມືອງເທົ່ານັ້ນ, ແຕ່ຫາກຍັງເປັນຂໍ້ມູນຂ່າວສານສໍາລັບຜູ້ທີ່ມີຄວາມສົນໃຈໃນການພັດທະນາຕົວເມືອງອີກດ້ວຍ.



From Patuxay Photo by Xang

ເນື້ອໃນຫຼັກ

# ວຽງຈັນປອດໄພ,
# ເລີ່ມຕົ້ນໄດ້ດ້ວຍການລົງມືຂອງທ່ານ.

## ເລີ່ມຕົ້ນຈາກການຮຽນຮູ້ກົດລະບຽບກ່ຽວກັບການພັດທະນາຕົວເມືອງ.

ຖ້າຫາກເຮືອນ ຫຼື ອາຄານຂອງທ່ານເກີດໄຟໄໝ້, ເຄື່ອງມອດໄຟ ຫຼື ລົດມອດໄຟສາມາດເຂົ້າເຖິງໄດ້ບໍ່? ມີຕຶກອາຄານໃກ້ບ້ານທ່ານທີ່ອາດເປັນອັນຕະລາຍບໍ່? ຖ້າທ່ານຈະສ້າງອາຄານໃນຕອນດິນທີ່ບໍ່ເຊື່ອມຕໍ່ກັບທາງ, ຖ້າເປັນແບບນັ້ນ. ມັນອາດຈະບໍ່ແມ່ນພຽງແຕ່ບັນຫາຂອງທ່ານ. ຖ້າຫາກອາຄານຂອງທ່ານເປັນອັນຕະລາຍ, ມັນກໍ່ອາດຈະເປັນອັນຕະລາຍຕໍ່ຄົນທີ່ອາໃສຢູ່ເຂດນັ້ນເຊັ່ນກັນ. ຕົວຢ່າງ, ‘ໃບອະນຸຍາດປຸກສ້າງ’ ແມ່ນກົດລະບຽບ ເພື່ອກວດສອບການອອກແບບກ່ອນ ແລະ ລະຫວ່າງການກໍ່ສ້າງອາຄານ ແລະ ມັນຍັງເປັນການປົກປ້ອງທ່ານ ແລະ ຄົນທີ່ທ່ານຮັກອີກດ້ວຍ. ການຮັບຮູ້ກົດລະບຽບ ແລະ ການປະຕິບັດທີ່ຖືກຕ້ອງ ຈະນໍາໄປສູ່ການເປັນຕົວເມືອງທີ່ປອດໄພຂຶ້ນ.

## ຄໍາແນະນໍາກ່ຽວກັບການພັດທະນາຕົວເມືອງ

ໃນຫົວຂໍ້ນີ້ ຈະໄດ້ແນະນໍານິຕິກໍາກ່ຽວກັບການພັດທະນາຕົວເມືອງ, ອົງກອນການຈັດຕັ້ງໃນການພັດທະນາຕົວເມືອງ ແລະ ແນວຄິດລິເລີ່ມຂອງການພັດທະນາຕົວເມືອງ.

ເນື້ອໃນຂອງຈົດໝາຍຂ່າວສະບັບນີ້ແມ່ນ **ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການຄຸ້ມຄອງການປຸກສ້າງ**

ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງການປຸກສ້າງ ໄດ້ຮັບການປັບປຸງໃນປີ 2019 (ຮັບຮອງໂດຍລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ, ເລກທີ 2241/ຍທຂ, ລົງວັນທີ 31 ມັງກອນ 2019), ໄດ້ກໍານົດມາດຕະການເພື່ອຮັບປະກັນໃຫ້ການປຸກສ້າງມີຄວາມເປັນເອກະພາບ, ປອດໄພ, ສວຍງາມ, ມີເອກະລັກ ແລະ ເປັນມິດຕໍ່ສິ່ງແວດລ້ອມອ້ອມຂ້າງ ກໍ່ຄືໃຫ້ສອດຄ່ອງກັບແຜນຜັງເມືອງ. ເນື້ອໃນຫຼັກຂອງຂໍ້ຕົກລົງສະບັບນີ້ມີຄື:

- ບົດບັນຍັດທົ່ວໄປ ເຊັ່ນ: ຈຸດປະສົງ ແລະ ນິຍາມສັບ (ມາດຕາ 1-4）
- ລັກສະນະ ແລະ ລະດັບຂອງການອະນຸຍາດປຸກສ້າງ (ມາດຕາ 5-6）
- ຂໍ້ມູນຜັງເມືອງ, ການສໍາຫຼວດ-ອອກແບບ ແລະ ແຜນຜັງຂໍອະນຸຍາດປຸກສ້າງ (ມາດຕາ 7-9)
- ຂັ້ນຕອນການອອກອະນຸຍາດປຸກສ້າງ (ມາດຕາ 10-13)
- ການຕິດຕາມການປຸກສ້າງ (ມາດຕາ 14-17)
- ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຜູ້ໄດ້ຮັບອະນຸຍາດປຸກສ້າງ ແລະ ຜູ້ຮັບເໝົາ (ມາດຕາ 18-19)
- ຂໍ້ຫ້າມ (ມາດຕາ 20-21)
- ອົງການຄຸ້ມຄອງຜັງເມືອງ (ມາດຕາ 22-26)
- ການກວດກາ ແລະ ແກ້ໄຂບັນຫາ ຫຼື ຂໍ້ຂັດແຍ່ງກ່ຽວກັບການປຸກສ້າງ (ມາດຕາ 27-29)
- ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ (ມາດຕາ 30-36)

ອື່ນໆ.

ສໍາລັບຂໍ້ຫ້າມດ້ານເທິງ (ມາດຕາ 20-21) ກໍານົດໃຫ້ບຸກຄົນ, ນິຕິບຸກຄົນທີ່ບໍ່ໄດ້ຮັບການອະນຸຍາດແມ່ນບໍ່ສາມາດດໍາເນີນການກໍ່ສ້າງໄດ້, ລວມໄປເຖິງການກໍ່ສ້າງທີ່ບໍ່ປະຕິບັດຕາມແຜນຜັງທີ່ໄດ້ຮັບອະນຸຍາດ, ການອອກແບບທີ່ບໍ່ສອດຄ່ອງກັບກົດລະບຽບ ແລະ ມາດຕະຖານ, ອື່ນໆ., ແລະ ບຸກຄົນ, ນິຕິບຸກຄົນ ຫຼືອົງການຈັດຕັ້ງທີ່ລະເມີດຕໍ່ຂໍ້ຕົກລົງດັ່ງກ່າວຈະຖືກກ່າວເຕືອນ, ສຶກສາອົບຮົມ, ມາດຕະການທາງວິໄນ, ປັບໄໝ, ມາດຕະການທາງແພ່ງ ແລະ ອາຍາ ຂຶ້ນກັບຄວາມຮ້າຍແຮງຂອງແຕ່ລະກໍລະນີ (ມາດຕາ 31) .

## ພວກເຮົາຈະເຮັດຫຍັງໄດ້ແດ່.

ຂັ້ນຕອນການອອກອະນຸຍາດປຸກສ້າງ* ແມ່ນຈັດຕັ້ງປະຕິບັດອີງຕາມຂໍ້ຕົກລົງວ່າດ້ວຍ ການຄຸ້ມຄອງການປຸກສ້າງທີ່ກ່າວມາຂ້າງເທິງ. ເພື່ອຄວາມປອດໄພຂອງຕົວເມືອງນະຄອນຫຼວງວຽງຈັນ, ກະລຸນາຍື່ນຂໍໃບອະນຸຍາດປຸກສ້າງ ກ່ອນດໍາເນີນການກໍ່ສ້າງ.





**ທ່ານສາມາດເຂົ້າເບິ່ງໃບຄໍາຮ້ອງໄດ້ທີ່ເວັບໄຊທ໌ VirGo;**

**https://virgo.mpwt.gov.la**

*ຂໍ້ມູນເພີ່ມເຕີມກ່ຽວກັບຂັ້ນຕອນການອອກອະນຸຍາດປຸກສ້າງ, ທ່ານສາມາດອ່ານໄດ້ທີ່ ‘ຄໍາແນະນໍາກ່ຽວກັບການພັດທະນາຕົວເມືອງ’ ຂອງຈົດໝາຍຂ່າວ ບ້ານເຮົາ ສະບັບທໍາອິດ.

ທ່ານສາມາດອ່ານສະບັບເອເລັກໂຕຣນິກໄດ້ທີ່ນີ້ →

ດັດແກ້ ແລະ ຈັດພິມໂດຍ: ກອງເລຂາ ການຈັດຕັ້ງກົນໄກການປະສານງານ ເພື່ອການຄຸ້ມຄອງຕົວເມືອງ ump.secretariat.laos@gmail.com

# ມີກົດລະບຽບຫຍັງແດ່ທີ່ກ່ຽວຂ້ອງກັບການພັດທະນາຕົວເມືອງ?

ການພັດທະນາຕົວເມືອງບໍ່ພຽງແຕ່ກ່ຽວຂ້ອງກັບການວາງແຜນຜັງເມືອງເທົ່ານັ້ນ, ແຕ່ຍັງມີກົດໝາຍ ແລະ ກົດລະບຽບທີ່ກ່ຽວຂ້ອງກັບການຄຸ້ມຄອງທີ່ດິນ, ການປົກປັກຮັກສາສິ່ງແວດລ້ອມ, ການກໍ່ສ້າງເສັ້ນທາງ ແລະ ໂຄງສ້າງພື້ນຖານ, ຄວາມປອດໄພຂອງອາຄານ, ອື່ນໆ. ສິ່ງເຫຼົ່ານີ້ມີຄວາມກ່ຽວພັນກັນ ແລະ ຈະມີປະສິດທິພາບຍິ່ງຂຶ້ນ ຖ້າທ່ານປະຕິບັດຕາມ ຢ່າງຖືກຕ້ອງເໝາະສົມ.

ເພາະສະນັ້ນ, ກະຊວງໂຍທາທິການ ແລະ ຂົນສົ່ງ ກໍ່ຄືກະຊວງ ແລະ ອົງການຈັດຕັ້ງອື່ນໆທີ່ກ່ຽວຂ້ອງ, ລວມທັງນະຄອນຫຼວງວຽງຈັນ ມີສ່ວນຮ່ວມໃນວຽກງານຕ່າງໆເຊັ່ນ: ການສຳຫຼວດ ແລະ ຂັ້ນຕອນການວາງແຜນ, ແລະ ການຕິດຕາມ ສອດຄ່ອງກັບກົດໝາຍ ແລະ ລະບຽບການ, ເພື່ອສ້າງໃຫ້ຕົວເມືອງມີຄວາມສວຍງາມ ແລະ ປອດໄພ. ທ່ານສົນໃຈກ່ຽວກັບກົດລະບຽບເຫຼົ່ານີ້ບໍ່? ຖ້າທ່ານສົນໃຈ ທ່ານສາມາດສຶກສາ ກ່ຽວກັບກົດໝາຍ ແລະ ກົດລະບຽບການພັດທະນາຕົວເມືອງເພີ່ມເຕີມໄດ້ທີ່ເວັບຂໍ້ມູນ VirGo.




* ສະບັບເລກທີ ແລະ ວັນເດືອນປີ ຂອງກົດໝາຍ ແລະ ລະບຽບການ ທີ່ໄດ້ລະບຸໃນເອກະສານນີ້ແມ່ນໄດ້ກວດເບິ່ງຄືນປີ 2023 ໂດຍ ກອງເລຂາ ການຈັດຕັ້ງກົນໄກການປະສານງານ ເພື່ອການຄຸ້ມຄອງຕົວເມືອງ. ກະລຸນາອ້າງອີງກົດໝາຍສະບັບຫຼ້າສຸດຕາມຄວາມເໝາະສົມ.

## ວີດີໂອຈະຊ່ວຍໃຫ້ທ່ານເຂົ້າໃຈກ່ຽວກັບກົດລະບຽບຫຼາຍຂຶ້ນ

### ການສ້າງເນື້ອໃນ

**ໄດ້ສ້າງວີດີໂອເຜີຍແຜ່ ເພື່ອສ້າງຄວາມເຂົ້າໃຈ ກ່ຽວກັບຂໍ້ຕົກລົງວ່າດ້ວຍ ການຄຸ້ມຄອງການປຸກສ້າງ ແລະ ຂໍ້ຕົກລົງວ່າດ້ວຍ ກົດຄວບຄຸມອາຄານຂອງລາວ***








ເພື່ອສ້າງຄວາມຄຸ້ນເຄີຍໃຫ້ແກ່ສາທາລະນະ ກ່ຽວກັບລະບົບ ແລະ ມາດຕະຖານກ່ຽວຂ້ອງກັບການກໍ່ສ້າງ ແລະ ຄວາມປອດໄພຂອງອາຄານ, ວີດີໂອການບັນລະຍາຍຈາກຄະນະນຳຕາງໜ້າກະຊວງໂຍທາທິການ ແລະ ຂົນສົ່ງ ໄດ້ສ້າງຂຶ້ນເພື່ອອະທິບາຍຂໍ້ກຳນົດກົດລະບຽບທີ່ກ່ຽວຂ້ອງ ໃນລັກສະນະທີ່ເຂົ້າໃຈງ່າຍ. ເຊິ່ງຫວັງວ່າຜູ້ພັດທະນາ ແລະ ບໍລິສັດກໍ່ສ້າງຕ່າງໆ, ລວມທັງເຈົ້າຂອງຕຶກອາຄານທົ່ວໄປ ຕະຫຼອດເຖິງນັກສະຖາປານິກ ຈະມີຄວາມຄຸ້ນເຄີຍຕໍ່ກັບລະບົບວຽກງານດັ່ງກ່າວ ເພື່ອນຳໄປສູ່ການພັດທະນາຕົວເມືອງໃຫ້ມີຄວາມປອດໄພຍິ່ງຂຶ້ນ. *ປັດຈຸບັນ, ກົດຄວບຄຸມອາຄານຂອງລາວແມ່ນກຳລັງຢູ່ໃນຂັ້ນຕອນການຮ່າງ ໂດຍການຮ່ວມມືກັບອົງການ JICA.

**ລາຍງານ**

## ກອງປະຊຸມ ກົນໄກການປະສານງານ ເພື່ອການຄຸ້ມຄອງຕົວເມືອງ ຄັ້ງທີ 6 (UMP#6) ໄດ້ຈັດຂຶ້ນຢູ່ 6 ເມືອງໃນນະຄອນຫຼວງວຽງຈັນ.
## ພາຍໃຕ້ຫົວຂໍ້ ຄວາມປອດໄພຂອງຕົວເມືອງຂອງພວກເຮົາ 'ບ້ານເຮົາ' - ຜ່ານລະບຽບຄຸ້ມຄອງການປຸກສ້າງ ແລະ ລະບຽບຄວບຄຸມອາຄານ -

ກະຊວງໂຍທາທິການ ແລະ ຂົນສົ່ງ ໄດ້ຈັດກອງປະຊຸມ ກົນໄກການປະສານງານ ເພື່ອການຄຸ້ມຄອງຕົວເມືອງ (UMP) ຄັ້ງທີ 6 ພາຍໃຕ້ຫົວຂໍ້ ຄວາມປອດໄພຂອງຕົວເມືອງຂອງພວກເຮົາ ຜ່ານລະບຽບຄຸ້ມຄອງການປຸກສ້າງ ແລະ ລະບຽບຄວບຄຸມອາຄານ ໃນລະຫວ່າງທ້າຍເດືອນມັງກອນຫາຕົ້ນເດືອນກຸມພາ ຢູ່ 6 ເມືອງໃນນະຄອນຫຼວງວຽງຈັນຄື: ເມືອງໄຊທານີ, ເມືອງໄຊເສດຖາ, ເມືອງຈັນທະບູລີ, ເມືອງນາຊາຍທອງ, ເມືອງສີສັດຕະນາກ ແລະ ເມືອງສີໂຄດຕະບອງ. ພາຍຫຼັງຮັບຊົມການສາຍວີດີໂອ ເພື່ອສ້າງຄວາມຮັບຮູ້ກ່ຽວກັບລະບຽບການ, ກໍ່ຍັງມີຄະນະວິຊາການຈາກ ກຄຜ, ສຍຂ ແລະ ພະແນກ ຍທຂ ນະຄອນຫຼວງວຽງຈັນ ໄດ້ອະທິບາຍຂັ້ນຕອນການຍື່ນຂໍໃບອະນຸຍາດ ແລະ ມາດຕະຖານເພີ່ມເຕີມ ເພື່ອສ້າງຄວາມເຂົ້າໃຈໃຫ້ແກ່ປະຊາຊົນ. ເຊິ່ງໃນທີ່ປະຊຸມໃຫ້ກຽດເປັນປະທານໂດຍເຈົ້າເມືອງ ແລະ ຮອງເຈົ້າເມືອງ ແລະ ກອງປະຊຸມໄດ້ຮັບຜົນສຳເລັດເປັນຢ່າງດີ, ດ້ວຍບັນຍາກາດການປຶກສາຫາລືທີ່ຄຶກຄື້ນ, ລວມໄປເຖິງເນັ້ນຢ້ຳເຖິງຄວາມສຳຄັນໃນການປະຕິບັດຕາມກົດລະບຽບ.



ວັນທີ 22 ມັງກອນ ທີ່ເມືອງໄຊທານີ


ວັນທີ 23 ມັງກອນ ທີ່ເມືອງໄຊເສດຖາ


ວັນທີ 24 ມັງກອນ ທີ່ເມືອງຈັນທະບູລີ


ວັນທີ 24 ມັງກອນ ທີ່ເມືອງສີສັດຕະນາກ


ວັນທີ 25 ມັງກອນ ທີ່ເມືອງນາຊາຍທອງ


ວັນທີ 6 ກຸມພາ ທີ່ເມືອງສີໂຄດຕະບອງ



